ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 10 ຫາ 14 ກໍລະກົດ 2023



ຂາຍໄຂ່ໄກ່ສ້າງລາຍຮັບມື້ລະ 8 ກີບ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ຂາຍໄຂ່ໄກ່ ສ້າງລາຍຮັບ ມື້ລະ 8 ແສນກີບ

ປັດຈຸບັນ ໄຂ່ໄກ່ ແມ່ນຜົນຜະລິດຈາກການລ້ຽງໄກ່ ເຊິ່ງເປັນອາຫານຫຼັກຂອງທຸກຄົວເຮືອນທີ່ເກືອບຈະປັດສະຈາກບໍ່ໄດ້, ລາຄາໄຂ່ໄກ່ຕາມທ້ອງຕະຫຼາດທົ່ວໄປມີລາຄາ 50-65 ພັນກີບຕໍ່ 1 ແຕະ (30 ໜ່ວຍ) ແລະ ເຊິ່ງໄດ້ມີຊາວກະສິກອນຫຼາຍທ່ານທີ່ປະກອບອາຊີບລ້ຽງໄກ່ພັນຂາຍຂາຍ, ໄດ້ສ້າງລາຍຮັບທີ່ດີໃຫ້ແກ່ຄອບຄົວ ຄືກັບ ທ່ານ ບຸນມາ ປາຊາຈັນ ອາຍຸ 43 ປີ ປະຊາຊົນບ້ານໂນນດິນຊາຍ ເມືອງລະຄອນເພັງ ແຂວງ ສາລະວັນ ໄດ້ຫັນຈາກອາຊີບເຮັດນາ ມາລ້ຽງໄກ່ພັນໄຂ່ຂາຍເປັນອາຊີບຕົ້ນຕໍຂອງຄອບຄົວດ້ວຍການໃຊ້ແຮງງານປະຈຳພຽງ 3 ຄົນ ຊຶ່ງລາວໄດ້ເລົ່າວ່າ: ຄອບຄົວຕົນເອງໄດ້ເລີ່ມລົງມືລ້ຽງໄກ່ພັນໄຂ່ມາແຕ່ປີ 2022 ດ້ວຍການຊື້ໄກ່ແມ່ພັນຈາກປະເທດເພື່ອນບ້ານໃນລາຄາໂຕລະ 150.000 ກີບ ຈຳນວນ 2.200 ໂຕ, ລວມເປັນເງິນທັງໝົດ 330.000.000 ກວ່າກີບ ແລະ ລົງທຶນໃສ່ການກໍ່ສ້າງຄອກໄກ່ 70 ລ້ານກວ່າກີບ.





ທ້າວ ບຸນມາ ປາຊາຈັນ ກ່າວວ່າ: ເລີ່ມແຕ່ມື້ນຳໄກ່ແມ່ພັນໄຂ່ມາລ້ຽງໃນ 3 ເດືອນທຳອິດ ສາມາດເກັບໄຂ່ໄດ້ມື້ລະ 15-20 ແຕະເທົ່ານັ້ນ ສາເຫດຍ້ອນໄກ່ກິນຫົວອາຫານບໍ່ອີ່ມ ບວກກັບເຕັກນິກປະສົບການໃນການລ້ຽງໄກ່ຂອງຕົນບໍ່ທັນສູງ, ຈາກນັ້ນຕົນກໍໄດ້ມີການແລກປ່ຽນຖອດຖອນບົດຮຽນຕື່ມຈາກວິຊາການຫ້ອງການກະສິກຳ-ປ່າໄມເມືອງ ແລະ ຜູ້ອື່ນໆທີ່ມີປະສົບການ ແລ້ວເອົາມາປະຕິບັດຕົວຈິງ ຫຼັງຈາກນັ້ນ 3 ເດືອນຕໍ່ມາ ໄກ່ກໍໄດ້ເລີ່ມໄຂ່ອອກມາໃນທຸກໆວັນ ສາມາດເກັບໄຂ່ໄກ່ໄດ້ມື້ລະ 1.600 ກວ່າໜ່ວຍ ຫຼື ປະມານ 55 ແຕະ/ມື້. ສາມາດຂາຍໄຂ່ໄກ່ໄດ້ປະມານ 2.900.000 ກີບ/ມື້ ແລະ ຂາຍໃນລາຄາ 54.000ກີບ/ແຕະ, ແຕ່ມາຫັກຄ່າຊິ້ນເປືອງໃຊ້ຈ່າຍຄ່າຫົວອາຫານ ແລະ ອື່ນໆ ປະມານ 2.100.000ກີບ/ມື້, ສະຫຼຸບແລ້ວ ທ້າວ ບຸນມາ ປາຊາຈັນ ມີລາຍຮັບຕົວຈິງຈາກການຂາຍໄຂ່ໄກ່ພັນໄດ້ 800.000 ກີບ/ມື້.

ທ່ານໄດ້ກ່າວຕື່ມວ່າ: ໄກ່ແມ່ພັນໄຂ່ແມ່ນມີອາຍຸໃນການລ້ຽງເກັບໄຂ່ປະມານ 2-3 ປີ ກໍຈະຂາຍແມ່ພັນອອກທັງໝົດ ແລະ ຍັງມີແຜນຈະຂາຍຄອກໄກ່ ແລະ ຈະໄດ້ຊື້ໄກ່ແມ່ສາວເຂົ້າມາໃໝ່ຕື່ມອີກໃນ. ສຳລັບຕະຫຼາດຈຳໜ່າຍແມ່ນໄດ້ຂາຍສົ່ງແມ່ຄ້າຕະຫຼາດທົ່ວໄປພາຍໃນເມືອງລະຄອນເພັງ ແລະ ຂາຍຕາມຮ້ານຂາຍເຄື່ອງຍ່ອຍ, ຮ້ານອາຫານອື່ນໆ, ທ່ານກ່າວຕື່ມອີກວ່າ: ໄຂ່ໄກ່ພັນແມ່ນຍັງບໍ່ພຽງພໍກັບຄວາມຮຽກຮ້ອງຕ້ອງຂອງທ້ອງຕະຫຼາດ ແລະ ຍັງມີຄວາມຕ້ອງການອີກ. ກຳໄລຈາກການຂາຍໄຂ່ໄກ່ ເຮັດໃຫ້ຊີວິດການເປັນຢູ່ຂອງຄອບຄົວທ້າວ ບຸນມາ ປາຊາຈັນ ດີຂຶ້ນຖ້າທຽບໃສ່ເມື່ອກ່ອນ ເຮັດໃຫ້ຄອບຄົວລາວຍັງມີທຶນຊື້ຂະຫຍາຍເນື້ອທີ່ດິນ ແລະ ຈົກໜອງປາຕື່ມອີກ 4 ໜອງ ແລະ ມີແຜນຈະລ້ຽງປາ ແລະ ປູກພືດແບບປະສົມປະສານຕື່ມອີກ.




<u>ຄະນະຮັບຜິດຊອບ:</u>
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

<u>ບັນນາທິການ:</u>
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

<u>ຈັດໜ້າອອກແບບໂດຍ:</u>
ທ່ານ ນ. ສີອຳພອນ ໄຊຍະລາດ

<u>ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່:</u> ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;